ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ກົມຄຸ້ມຄອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ເລກທີ 1171 /ກຄສບ

ນະຄອນຫຼວງວຽງຈັນ, ວັນທີ 29 MAY 2026

ແຈ້ງການ

ເຖິງ: - ທ່ານ ຜູ້ອຳນວຍການ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ;
- ທ່ານ ຜູ້ອຳນວຍການ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ;
- ທ່ານ ຜູ້ອຳນວຍການ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ;
- ທ່ານ ຜູ້ອຳນວຍການ ບໍລິສັດເຊົ່າສິນເຊື່ອ;
- ທ່ານ ຜູ້ອຳນວຍການ ໂຮງຊວດຈຳ. **ທີ່ນັບຖື.**

ເລື່ອງ: ການປັບປຸງແບບຟອມ "ໃບລາຍງານຂໍ້ມູນຖານະການເງິນ" ໃໝ່ ສຳລັບການລາຍງານຮູບແບບເອກະສານ.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມຄຸ້ມຄອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ສະບັບເລກທີ 975/ທຫລ, ລົງວັນທີ 07 ທັນວາ 2022;
- ອີງຕາມ ຄຳແນະນຳ ວ່າດ້ວຍການບັນທຶກບັນຊີການຈັດຊັ້ນ ແລະ ການຫັກເງິນແຮ ສຳລັບສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ສະບັບເລກທີ 0002/ກຍງ ລົງວັນທີ 27 ມີນາ 2026;
- ອີງຕາມ ແຈ້ງການ ປະການໃຊ້ແບບຟອມລາຍງານ (Form) ຂອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ສະບັບເລກທີ 325/ກຄສງ, ລົງວັນທີ 20 ກັນຍາ 2021.

ກົມຄຸ້ມຄອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ (ກຄສບ) ຂໍຖືເປັນກຽດແຈ້ງມາຍັງທ່ານຊາບ ກ່ຽວກັບ ການປັບປຸງແບບຟອມລາຍງານຮູບແບບເອກະສານໃໝ່ ໂດຍສະເພາະແມ່ນ ໃບລາຍງານຂໍ້ມູນຖານະການເງິນ ສຳລັບ ການລາຍງານຮູບແບບເອກະສານ ເພື່ອໃຫ້ສອດຄ່ອງຕາມ ຄຳແນະນຳ ສະບັບເລກທີ 0002/ກຍງ ລົງວັນທີ 27 ມີນາ 2026 ທີ່ໄດ້ມີການປັບປຸງການບັນທຶກບັນຊີເພີ່ມໃໝ່ຄື: ບັນຊີເງິນແຮຄ່າເສື່ອມສິນເຊື່ອຊັ້ນປົກກະຕິ (ເລກບັນຊີ 1271xxx) ແລະ ເງິນແຮຄ່າເສື່ອມໜີ້ຄວນເອົາໃຈໃສ່ (ເລກບັນຊີ 1289xxx) ຊຶ່ງນຳໃຊ້ສຳລັບສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ປະຕິບັດຕາມ IFRS. ຊຶ່ງລາຍລະອຽດການປັບປຸງໃບລາຍງານຂໍ້ມູນຖານະການເງິນມີດັ່ງນີ້:

1) ເພີ່ມ 01 ລາຍການເຂົ້າໃນຂໍ້ທີ **5. ສິນເຊື່ອ ແລະ ເງິນລ່ວງໜ້າໃຫ້ລູກຄ້າສຸດທິ** ຄື ຂໍ້ **5.4 ເງິນແຮຄ່າເສື່ອມໜີ້ຊັ້ນປົກກະຕິ (ສະຖາບັນການເງິນທີ່ປະຕິບັດຕາມ IFRS)** ຊຶ່ງສະແດງຍອດເຫຼືອຈາກເລກບັນຊີ 1271 ແລະ 1289 ລວມເຂົ້າກັນ;
2) ປັບປຸງຫົວຂໍ້ 5.4 ເງິນແຮຄ່າເສື່ອມໜີ້ທວງຍາກ (ເກົ່າ) ເປັນ ຂໍ້ 5.5 **ເງິນແຮຄ່າເສື່ອມໜີ້ທວງຍາກ**. (ຮ່າງ ແບບຟອມໃບລາຍງານຖານະການເງິນ ໄດ້ຄັດຕິດມາພ້ອມນີ້)

ທະນາຄານແຫ່ງ ສປປ ລາວ, ຖະໜົນ ຢອນເມ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 BNL.VTE.LS
ໂທລະສານ: (856)-21-213108 ໂທລະສັບ: 213109-213110 Email: BOL@bol.gov.la; www.bol.gov.la

- ນອກຈາກນີ້, ກຄສບ ຍັງໄດ້ສຳເລັດການປັບປຸງລະບົບບໍລິຫານຂໍ້ມູນຂອງ ກຄສບ ແລະ ລະບົບທົດສອບບົດລາຍງານ ເພື່ອໃຫ້ສາມາດຮອງຮັບບົດລາຍງານຮູບແບບ XML/JSON ໃນກໍລະນີທີ່ສະຖາບັນການເງິນທີ່ບໍ່ແມ່ນທະນາຄານມີທຸລະກຳດັ່ງກ່າວເກີດຂຶ້ນອີກດ້ວຍ.

ໃຫ້ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ຈັດຕັ້ງປະຕິບັດການສົ່ງລາຍງານຕາມແບບຟອມລາຍງານສະບັບປັບປຸງໃໝ່ ເລີ່ມແຕ່ການສົ່ງບົດລາຍງານປະຈຳເດືອນມິຖຸນາ 2026 ເປັນຕົ້ນໄປ ຫຼື ຖ້າສະຖາບັນການເງິນທີ່ບໍ່ແມ່ນທະນາຄານໃດມີຄວາມພ້ອມກໍ່ສາມາດເລີ່ມຈັດຕັ້ງປະຕິບັດໄດ້ເລີຍ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຮັບຊາບ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

ຫົວໜ້າກົມ

ວິສອນ ໄຊສົງຄາມ

ຕິດຕໍ່ພົບພັນ: ພະແນກບໍລິຫານຂໍ້ມູນຂ່າວສານ, ກຄສບ.
ໂທລະສັບ: 021 265607

(ສະບັບປັບປຸງໃໝ່)

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ໃບລາຍງານ
ຂໍ້ມູນຖານະການເງິນ

ສະຖາບັນການເງິນ.....
XXXX-XX
MM/YYYY
DD/MM/YYYY

ລາຍການ	ຈຳນວນເງິນ (ກີບ)	
1 ເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ	-	
1.1 ເງິນສົດ ແລະ ທີ່ຖືວ່າຄືເງິນສົດ 1.2 ເງິນຝາກບໍ່ມີກຳນົດ 1.3 ເງິນຝາກມີກຳນົດ		
2 ໜີ້ຕ້ອງຮັບຈາກສະຖາບັນການເງິນອື່ນ	-	
2.1 ເງິນຝາກບໍ່ມີກຳນົດ 2.2 ເງິນຝາກມີກຳນົດ 2.3 ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າສຸດທິ		
3 ຫຼັກຊັບຊື້ໂດຍມີສັນຍາຂາຍຄືນ	-	
3.1 ຫຼັກຊັບຊື້ໂດຍມີສັນຍາຂາຍຄືນ 3.2 ໜີ້ຕ້ອງຮັບທ່ວງຍາກ ແລະ ລາຍການອື່ນໆ		
4 ເງິນລົງທຶນໃນຫຼັກຊັບສຸດທິ	-	
4.1 ຫຼັກຊັບເພື່ອຄ້າ 4.2 ຫຼັກຊັບຊື້ເພື່ອຂາຍ 4.3 ຫຼັກຊັບລົງທຶນ		
5 ສິນເຊື່ອ ແລະ ເງິນລ່ວງໜ້າໃຫ້ລູກຄ້າສຸດທິ	-	
5.1 ໜີ້ປົກກະຕິ 5.2 ໜີ້ຄວນເອົາໃຈໃສ່ 5.3 ໜີ້ທ່ວງຍາກຈາກລູກຄ້າ 5.4 ເງິນແຮ່ຄ່າເສື່ອມໜີ້ຊັ້ນປົກກະຕິ (ສະຖາບັນການເງິນທີ່ປະຕິບັນຕາມ IFRS) 5.5 ເງິນແຮ່ຄ່າເສື່ອມໜີ້ທ່ວງຍາກ	(ຍອດເຫຼືອຈາກຫົວບັນຊີ 1271 + 1289)	(ເພີ່ມໃໝ່) (ປັບປຸງຫົວຂໍ້ຈາກ 5.4 ເປັນ 5.5)
6 ເງິນລົງທຶນໃນວິສາຫະກິດໃນກຸ່ມ, ບໍລິສັດຮ່ວມທຶນ ແລະ ກິດຈະການຄຸ້ມຄອງຫຼັກຊັບ	-	
6.1 ເງິນລົງທຶນໃນທຸລະກິດໃນກຸ່ມ 6.2 ເງິນແຮ່ຄ່າເຊື່ອມຂອງເງິນລົງທຶນ 6.3 ເງິນລົງທຶນຮ່ວມຂອງວິສາຫະກິດໃນກຸ່ມ ແລະ ຫຼັກຊັບໃນກິດຈະການຄຸ້ມຄອງຫຼັກຊັບ 6.4 ເງິນແຮ່ຄ່າເຊື່ອມການລົງທຶນຂອງວິສາຫະກິດໃນກຸ່ມ ແລະ ຫຼັກຊັບ		
7 ສິນເຊື່ອເຊົ່າ-ຊື້ ແລະ ໃຫ້ເຊົ່າການເງິນ	-	
7.1 ສິນເຊື່ອເຊົ່າຊື້ ແລະ ກິດຈະກຳປະເພດດຽວກັນ 7.2 ຄ່າຫຼ້ຍຫ້ຽນສະສົມ ຊັບສິນບັດຄົງທີ່ໃຫ້ເຊົ່າຊື້ ແລະ ກິດຈະກຳປະເພດດຽວກັນ 7.3 ເງິນແຮ່ຄ່າເຊື່ອມມູນຄ່າ ຊັບສິນບັດຄົງທີ່ໃຫ້ເຊົ່າຊື້ ແລະ ກິດຈະກຳປະເພດດຽວກັນ 7.4 ຊັບສິນບັດຄົງທີ່ໃຫ້ເຊົ່າທຳມະດາ 7.5 ຄ່າຫຼ້ຍຫ້ຽນສະສົມ ຊັບສິນບັດຄົງທີ່ໃຫ້ເຊົ່າທຳມະດາ 7.6 ເງິນແຮ່ຄ່າເຊື່ອມມູນຄ່າ ຊັບສິນບັດຄົງທີ່ໃຫ້ເຊົ່າທຳມະດາ 7.7 ໜີ້ຕ້ອງຮັບທ່ວງຍາກ 7.8 ເງິນແຮ່ຄ່າເຊື່ອມມູນຄ່າໜີ້ຕ້ອງຮັບທ່ວງຍາກ		
8 ຊັບສິນບັດຄົງທີ່ສຸດທິ	-	
8.1 ຊ.ຄ.ທ ພວມຊື້ ແລະ ພວມກໍ່ສ້າງ		

8.2 ຊ.ຄ.ທ ບໍ່ມີຕົວຕົນ	
8.3 ຊ.ຄ.ທ ມີຕົວຕົນ	
9 ທຶນຈົດທະບຽນບໍ່ທັນໄດ້ຖອກ	-
9.1 ຜູ້ຖືຮຸ້ນ	
10 ຊັບສິນອື່ນໆ	-
10.1 ດອກເບ້ຍ ແລະ ລາຍຮັບອື່ນໆຄ້າງຮັບ	
10.2 ບັນຊີລະຫວ່າງສຳນັກງານໃຫຍ່ກັບສາຂາ	
10.3 ອື່ນໆ	
I ຊັບສິນທັງໝົດ	-
11 ໜີ້ຕ້ອງສົ່ງໃຫ້ທະນາຄານ ແລະ ສະຖາບັນການເງິນອື່ນ	-
11.1 ເງິນຮັບຝາກບໍ່ມີກຳນົດ	
11.2 ເງິນຮັບຝາກມີກຳນົດ	
11.3 ເງິນກູ້ຢືມ	
11.4 ໜີ້ຕ້ອງສົ່ງອື່ນໆໃຫ້ທະນາຄານ ແລະ ສະຖາບັນການເງິນອື່ນ	
12 ໜີ້ຕ້ອງສົ່ງໃຫ້ລູກຄ້າ	-
12.1 ເງິນຮັບຝາກບໍ່ມີກຳນົດ	
12.2 ເງິນຮັບຝາກມີກຳນົດ	
12.3 ໜີ້ຕ້ອງສົ່ງອື່ນໆໃຫ້ລູກຄ້າ	
13 ຫຼັກຊັບຂາຍໂດຍມີສັນຍາຊື້ຄືນ	-
13.1 ຫຼັກຊັບຂາຍໂດຍມີສັນຍາຊື້ຄືນ	
14 ໜີ້ຕ້ອງສົ່ງທີ່ກຳເນີດຈາກການຈຳໜ່າຍຫຼັກຊັບ	-
14.1 ເອກະສານຢັ້ງຢືນການກູ້ຢືມເງິນ	
14.2 ພັນທະບັດ ຫຼື ເງິນກູ້ທີ່ໄດ້ຈຳໜ່າຍອອກ	
15 ໜີ້ສິນອື່ນໆ	-
15.1 ດອກເບ້ຍ ແລະ ລາຍຈ່າຍອື່ນໆຄ້າງຈ່າຍ	
15.2 ບັນຊີພົວພັນລະຫວ່າງສຳນັກງານໃຫຍ່ກັບສາຂາ	
15.3 ອື່ນໆ	
16 ທຶນ ແລະ ຖືວ່າເປັນທຶນຂອງສະຖາບັນການເງິນ	-
16.1 ທຶນຈົດທະບຽນ	
16.2 ສ່ວນເພີ່ມມູນຄ່າຮຸ້ນ	
16.3 ຄັງສຳຮອງຕາມກົດໝາຍ	
16.4 ຄັງຂະຫຍາຍທຸລະກິດສະຖາບັນການເງິນ	
16.5 ຄັງສຳຮອງອື່ນໆ	
16.6 ສ່ວນຜິດກ່ຽງຈາກການຕີມູນຄ່າຄືນໃໝ່	
16.7 ເງິນແຮຕາມຂໍ້ກຳນົດ (ເງິນແຮ່ຄ່າເຊື່ອມເງິນກູ້ປົກກະຕິ)	(ຍອດເງືອຂອງເລກບັນຊີ 340)
16.8 ກຳໄລ-ຂາດທຶນສະສົມ	
16.9 ຜົນໄດ້ຮັບລໍຖ້າຮັບຮອງ	
16.10 ຜົນໄດ້ຮັບໃນປີ	
16.11 ເງິນທຶນຊ່ວຍໜຸນ ແລະ ທຶນທີ່ໄດ້ຈັດສັນ	
16.12 ໜີ້ຕ້ອງສົ່ງສຳຮອງ	
16.13 ເງິນຮຸ້ນສະມາຊິກຂອງ ສສງ	
II ໜີ້ສິນ ແລະ ທຶນທັງໝົດ	-

ທີ່....., ວັນທີ.....

ຜູ້ອຳນວຍການ ຜູ້ກວດກາ ຜູ້ສັງລວມ